# ການກວດ COVID-19

## ຂ້ອຍຄວນທຳການກວດ COVID-19 ຍາມໃດ?



- ທ່ານມີອາການຂອງ COVID-19.
- ທ່ານມີຄວາມສ່ຽງສູງທີ່ຈະເປັນພະຍາດຮ້າຍແຮງ ແລະ ເມື່ອບໍ່ດົນມານີ້ໄດ້ສຳຜັດກັບຜູ້ຕິດເຊື້ອ COVID-19.
- ທ່ານເປັນຜູ້ຕິດຕໍ່ໃນຄົວເຮືອນ ຫຼື ເຄີຍມີຄວາມສ່ຽງສູງ ຫຼື ປານກາງກັບຜູ້ທີ່ຕິດເຊື້ອ COVID-19.

## ໃຜມີຄວາມສ່ຽງສູງທີ່ຈະເປັນພະຍາດຮ້າຍແຮງ?

- ຄົນອາຍຸ 60 ປີຂຶ້ນໄປ
- ແມ່ຍິງຖືພາ
- ຊາວອາບໍຣິຈິໂນລ, ຊາວເກາະທໍເຣັສເທຣດ ແລະຊາວເກາະປາຊີຟິກ (ຈາກອາຍຸ 35 ປີຂຶ້ນໄປ)
- ຄົນທີ່ເປັນໂຣກອ້ວນ, ພະຍາດເບົາຫວານ, ພະຍາດກ່ຽວກັບຫຼອດເລືອດຫົວໃຈ(cardiovascular) ຮ້າຍແຮງ, ພະຍາດປອດຊໍາເຮື້ອ *(ລວມທັງພະຍາດຫືດຮ້າຍແຮງທີ່ຕ້ອງເຂົ້າໂຮງໝໍພາຍໃນ 12 ເດືອນທີ່ຜ່ານມາ)*, ພະຍາດຕັບຫຼືໝາກໄຂ່ຫຼັງຊໍາເຮື້ອຮ້າຍແຮງ, ມະເຮັງທີ່ກໍາລັງເປັນຢູ່ ຫຼື ຜູ້ທີ່ມີພູມຕ້ານທານອ່ອນແອ
- ບາງຄົນທີ່ມີຄວາມພິການ ລວມທັງຄົນພິການທີ່ມີຜົນກະທົບຕໍ່ ປອດ, ຫົວໃຈ ຫຼື ລະບົບພູມຄຸ້ມກັນຂອງພວກເຂົາ
- ຜູ້ຢູ່ອາໄສຂອງສະຖານທີ່ດູແລຜູ້ສູງອາຍຸ ແລະຄົນພິການ
- ຄົນອາຍຸ 18 ປີຂຶ້ນໄປທີ່ບໍ່ໄດ້ຮັບການສັກຢາວັກຊີນ

## ຂ້ອຍຄວນກວດ COVID-19 ດ້ວຍອັນໃດ?



ມີ**ສອງການກວດ**ທີ່ແຕກຕ່າງກັນທີ່ທ່ານສາມາດໄດ້ຮັບເພື່ອກວດເບິ່ງວ່າທ່ານເປັນ COVID-19 ຫຼືບໍ່. ການກວດດ້ວຍ **ຣາປິດ ແອນຕິເຈັນ** (RAT) ທີ່ທ່ານສາມາດເຮັດໄດ້ຕົວທ່ານເອງແລະ**ການກວດແບບ PCR** (ຕ້ອຍເອົາສິ້ນສ່ວນໃນຮູດັງ ແລະໃນຮູຄໍ) ທີ່ເຮັດຢູ່ຄລີນິກການກວດ

- **ຖ້າທ່ານມີຄວາມສ່ຽງສູງທີ່ຈະເປັນພະຍາດຮ້າຍແຮງ** ທ່ານຄວນໄປ**ກວດ PCR**. ຖ້າທ່ານບໍ່ສາມາດໄດ້ຮັບຜົນການກວດ PCR ໄດ້ໂດຍໄວ, ໃຫ້ເຮັດການກວດແບບ ຣາປິດ ແອນຕິເຈັນ (ຖ້າທ່ານມີ) ໃນຂະນະທີ່ທ່ານລໍຖ້າຜົນການກວດແບບ PCR.
- ຖ້າທ່ານບໍ່ມີຄວາມສ່ຽງສູງທີ່ຈະເປັນພະຍາດຮ້າຍແຮງ, ໃຫ້ເຮັດການການກວດແບບ ຣາປິດ ແອນຕິເຈັນ ເວັ້ນເສັຍແຕ່ວ່າທ່ານໝໍຂອງທ່ານບອກທ່ານໃຫ້ເຮັດການກວດ PCR.

## ຂ້ອຍຈະເຮັດແນວໃດຖ້າຂ້ອຍກວດພົບວ່າເປັນ COVID-19 ທາງບວກ?




- ຖ້າທ່ານມີຜົນກວດ **PCR ເປັນບວກ**, ເຖິງແມ່ນວ່າທ່ານຈະບໍ່ມີອາການ, ທ່ານກໍມີ COVID-19. ທ່ານຕ້ອງປະຕິບັດຕາມຄໍາແນະສໍາລັບຜູ້ທີ່ ກວດພົບວ່າເປັນ COVID-19 ທາງບວກ ແລະ ການຈັດການກັບ COVID-19 ຢ່າງປອດໄພຢູ່ເຮືອນ.
- ຖ້າທ່ານມີຜົນການກວດແບບ ຣາປິດ ແອນຕິເຈັນໃນທາງບວກ, **ໃຫ້ລົງທະບຽນຜົນໄດ້ຮັບກັບ Service NSW** ແລະປະຕິບັດຕາມຄໍາແນະນໍາສໍາລັບຜູ້ທີ່ ກວດພົບວ່າເປັນ COVID-19 ທາງບວກແລະການຈັດການກັບ COVID-19 ຢ່າງປອດໄພຢູ່ເຮືອນ.

ຖ້າຫາກວ່າມີຄວາມກັງວົນດ້ານສຸຂະພາບແລະຕ້ອງການການຊ່ວຍເຫຼືອດ້ານພາສາ, ໂທຫາ **TIS 131 450** ແລະ ຂໍເອົາ ສາຍ Health Direct ຕາມເບີໂທລະສັບ **1800 022 222**.



© NSW Health June 2022.